**<u>ແຜນການສອນ:</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 06 ທັນວາ 2009 (12-06-2009)**

---

**<u>ເຊີນສະເດັດມາອົງພຣະເຢຊູຜູ້ເຮົາລໍຄອຍ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມີກາ 5:1-5ກ; 7:18-20)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ຜູ້ປະກາດພຣະທັມມີກາ ໄດ້ທຳນວາຍຕໍ່ຄົນທີ່ຖືກເຈັບ. ເຣື່ອງທີ່ເພິ່ນທຳນວາຍນັ້ນ ແມ່ນວ່າມີພຣະເຈົ້າຜູ້ນຳຄວາມປອດພັຍມາສູ່ຄົນຂອງພຣະອົງ. ຄຳທຳນວາຍນີ້ໄດ້ສຳເຣັດລົງໃນພຣະເຢຊູຜູ້ເປັນອົງພຣະເມຊີອາ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ບົດຮຽນນີ້ເປັນຜົນສະທ້ອນຕໍ່ຊີວິດຂອງທ່ານ ເພາະເຮົາຈະໄດ້ມີທາງໄດ້ຮັບຄວາມປອດພັຍຢ່າງດີ, ໄດ້ຮັບການເບິ່ງແຍງ, ແລະໄດ້ຮັບຄວາມລອດພົ້ນ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ຄົນອາວຸໂສເກືອບໝົດທຸກຄົນໄດ້ຖືກບັງຄັບ, ມີບັນຫາທາງດ້ານຄວາມສັມພັນ ຂນົບທັມນຽມ ແລະຄວາມເຊື່ອຖື. ພວກເຂົາເຈົ້າໄດ້ລໍຄອຍຮັບເອົາຄວາມປອດພັຍ ຊຶ່ງມີຢູ່ແຕ່ໃນພຣະເຢຊູພຽງເທົ່ານັ້ນ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ພວກຄົນອາວຸໂສໃນສມັຍນີ້ໄດ້ຖືກເສດຖະກິດບັງຄັບ, ດ້ານຄວາມສັມພັນ, ຂນົບທັມນຽມ, ແລະຄວາມເຊື່ອຖືແນວໃດແດ່?
ຢູ່ໃນນີ້ແມ່ນການບັງຄັບອັນໃດທີ່ທ່ານປະເຊີນຢູ່? ແມ່ນຫຍັງທີ່ທ່ານລໍຄອຍໃຫ້ພຣະເຢຊູກະທຳໃຫ້ທ່ານ?

1. **<u>ພວກເຮົາຕ້ອງການຢ່າງໃຫຍ່ຫລວງ:</u>** (ມີກາ 5:1-3)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມີກາ 5:1-3
- ຜູ້ປະກາດພຣະທັມມີກາໄດ້ປະເມີນເບິ່ງຄົນທີ່ຢູ່ໃນສມັຍຂອງລາວທີ່ຖືກບັງຄັບ ແລະຄວບຄຸມຈາກການຂູ່ເຂັນຂອງພວກຣຸກຮານອັດຊີເຣັຽ. ຜູ້ປະກາດພຣະທັມມີກາໄດ້ເຫັນພວກອັດຊີເຣັຽສ່ວນຫລາຍໄດ້ຄຸກຄາມດ້ວຍມື. ລາວ (ມີກາ) ກໍໄດ້ທຳນວາຍເຖິງເຣື່ອງການໂຈມຕີຍຶດເອົາຄົນບາບີໂລນຂອງເຢຣູຊາ

ເລັມ ໃນປີ 586 ໄວ້ກ່ອນເໝືອນກັນ. ກ່ອນພຣະຄຣິດ (ສອງສັດຕະວັດຕໍ່ມາ) ມີການໍາເອົາພຣະທັມແຫ່ງຄວາມຫວັງມາສູ່ທຸກຄົນທີ່ລໍຄອຍພຣະເຈົ້າມາປົດປ່ອຍ.

- ເຂົາເຈົ້າໄດ້ລໍຄອຍພຣະເມຊີອາມາປົດປ່ອຍເຂົາເຈົ້າອອກຈາກການບີບບັງຄັບທຸກຢ່າງຂອງເຂົາເຈົ້າ, ໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມເພງສັຣເສີນ 91:9-13. ເປັນເພາະເຫດໃດທ່ານຈຶ່ງມີຄວາມເຊື່ອວ່າ ພຣະເຍຊູສາມາດປົດປ່ອຍທ່ານໃຫ້ພົ້ນຈາກການເປັນທາດສິ່ງເຫລົ່ານັ້ນໃນໄວໆນີ້?
- ເອົາກ້ອນຫີນນ້ອຍກ້ອນນຶ່ງ ກັບຢາງຍືດໜາແດ່ເສັ້ນນຶ່ງມາ, ແລ້ວເລົ່າເຣື່ອງຂອງດາວິດກັບໂກໄລອາດ (1 ຊມອ ບົດທີ 17) ພຣະເຈົ້າຊົງໃຊ້ຜູ້ສມັກໃຈທີ່ຫລາຍຄົນວ່າເປັນໄປບໍ່ໄດ້ (ບໍ່ສົມຄວນ, ບໍ່ເໝາະສົມ) ຕາມມາຕຖານການອ້າງອີງຂອງທີ່ໃຫ້ອິສຣາເອນໄດ້ຊັຍຊະນະແນວໃດ?.
- ຄໍາຖາມ: ແມ່ນຫຍັງເປັນການຍຶດຖືຂອງໂລກທີ່ພຣະເຈົ້າໄດ້ຊົງເປີດເຜີຍໃຫ້ເຂົາຮູ້?

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ມີກາ 5:1-3)

1. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງເລືອກເອົາເມືອງເບັດເລເຮັມເປັນບ່ອນກໍາເກີດຂອງພຣະເຢຊູ?
2. ໃນບ່ອນນັ້ນທ່ານຖືວ່າເປັນທີ່ສໍາຄັນໃນຊີວິດຂອງທ່ານຢູ່ບໍ່?
3. ທ່ານຈະໜູນຈິດໜູນໃຈຄົນອື່ນທີ່ຍັງຕົກຢູ່ໃນຄວາມສໍາຄັນນໍາຮູບໂສມຂອງຕົນໃຫ້ມາຫາຄວາມສໍາຄັນຂອງຕົນໃນພຣະຄຣິດໄດ້ແນວໃດ?

2. <u>**ພວກເຮົາຕ້ອງການພຣະຜູ້ລ້ຽງ:**</u> (ມີກາ 5:4-5ກ)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມີກາ 5:4-5ກ
- ມີກາໄດ້ທໍານວາຍເຖິງການສະເດັດມາບັງເກີດຂອງພຣະຜູ້ໂຜດໃຫ້ພົ້ນ ຊຶ່ງເປັນການສະເດັດມາຄັ້ງແຣກຂອງພຣະອົງ (5:12) ລາວເວົ້າເຖິງການປົກຄອງຂອງພຣະອົງທີ່ລາວໄດ້ທໍານວາຍເຖິງການເປັນກະສັດໃນສະເດັດມາຄັ້ງທີຂອງພຣະອົງ (ຄ:3-5).
- ໃນແສງສວ່າງທີ່ມີກາ 5:4, ໃຫ້ນັກຮຽນເຣື່ອງເພງສັຣສີນ 23. ໃຫ້ນັກຮຽນອ່ານ ໂຢຮັນ 10:11. ການປົກຄອງອິສຣາເອນເລັງເຖິງພຣະອົງເອງ ໃນ ໂຢຮັນ 10:11ໃນພຣະທັມທີ່ກ່າວມານີ້ຄືກັນຢ່າງໃດ? ສ່ວນຫລາຍຄົນທີ່ຢູ່ໃນສມັຍຂອງມີກາບໍ່ຄ່ອຍຟັງສຽງຂອງພວກຜູ້ລ້ຽງແກະບອກ. ເປັນຫຍັງພວກຜູ້ອາວຸໂສເຫລົ່ານີ້ຈຶ່ງບໍ່ຢາກຕິດຕາມຄໍາປະກາດຂອງພວກລ້ຽງແກະ? ທ່ານຄິດວ່າແນວໃດ? ດຽວນີ້ພວກຄົນທີ່ຮັ່ງມີ ສລາດ ມີປັນຍາກໍຍັງພາກັນຊອກຫາພຣະຜູ້ເປັນເຈົ້າຢູ່, ພວກເຂົາຫລາຍຄົນບໍ່ຍອມເຊື່ອຟັງຜູ້ປະກາດພຣະທັມ.

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ມີກາ 5:4-5ກ

1. ມີຫຍັງແດ່ທີ່ທ່ານຈື່ໃນການນໍາພາ ແລະການແນະນໍາຂອງພວກລ້ຽງແກະ?
2. ທ່ານຮູ້ໄດ້ຢ່າງໃດວ່ານັ້ນເປັນສຽງຂອງພຣະອົງ (ໂຢຮັນ 10:3) ແລະນັ້ນບໍ່ແມ່ນສຽງຂອງຄົນອື່ນ?
3. ພວກຜູ້ລ້ຽງແກະລ້ຽງທ່ານແນວໃດແດ່?
4. ທ່ານໄດ້ອາສັຍຜູ້ລ້ຽງແກະລ້ຽງທ່ານ, ຫລືທ່ານຍັງຊອກຫາທີ່ຈະພົບຜູ້ປົດປ່ອຍທີ່ທ່ານຕ້ອງການ ແລະ
5. ໄດ້ລໍຄອຍຈາກບ່ອນອື່ນ ສິ່ງອື່ນຢູ່ບໍ່?
6. ຄວາມປອດພັຍໃນພຣະຄຣິດຂອງທ່ານ ທ່ານມີຄວາມໝັ້ນໃຈຫລາຍປານໃດ?

3 . **<u>ພວກເຮົາຕ້ອງການຄວາມລອດພົ້ນ:</u>** (ມີກາ 7:18-20)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມີກາ 7:18-20
- ຊື່ມີກາ ມີຄວາມໝາຍວ່າ "ແມ່ນຜູ້ເປັນເໝືອນພຣະເຈົ້າບໍ່"? ປໂຍກນີ້ມີຄວາມໝາຍວ່າແນວໃດ?
- ມີກາ, ໝັ້ນໃຈໃນການບໍ່ປ່ຽນແປງ ການໃຫ້ອະພັຍ, ຮັກ, ແລະຄວາມຊື່ສັດຂອງພຣະເຈົ້າທີ່ເຕືອນພວກເຮົາຊື່ຂອງລາວຊື່ນຊົມຢູ່ໃນພຣະເຈົ້າຕໍ່ຄວາມລອດພົ້ນຂອງລາວ. ພຣະອົງເປັນພຣະເຈົ້າແຫ່ງຄວາມລອດພົ້ນຂອງທ່ານບໍ່? ທ່ານມີຄວາມຊື່ນຊົມໃນພຣະອົງບໍ່?
- ອີງຕາມພຣະທັມມີກາ 7:19 ແລ້ວພຣະເຈົ້າໄດ້ກະທຳສິ່ງໃດແກ່ທ່ານ?
- ຂອງຂວັນອັນລ້ຳຄ່າທີ່ທ່ານເຄີຍໄດ້ຮັບນັ້ນແມ່ນຫຍັງ? ທ່ານຈະຊ່ວຍຄົນອື່ນໃຫ້ໄດ້ຮັບຂອງຂັວນໃນຣະດູນີ້ຢ່າງໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມີກາ 7:18-20

1. ທ່ານມີຄວາມຈິງໃຈທູນຂໍໃຫ້ພຣະຄຣິດອະພັຍສຳລັບຄວາມຜິດບາບ ແລະຮັບເອົາພຣະອົງເປັນອົງພຣະຜູ້ເປັນເຈົ້າ ແລະເປັນພຣະຜູ້ຊ່ວຍຂອງທ່ານບໍ່?
2. ຜົນຮັບຈາກການບໍ່ຊົງປ່ຽນແປງຄວາມຮັກຂອງພຣະອົງມີຕໍ່ຊີວິດຂອງທ່ານແນວໃດ? ທ່ານຈະແບ່ງປັນການບໍ່ຊົງປ່ຽນແປງຄວາມຮັກ ການໃຫ້ອະພັຍຂອງພຣະອົງໃຫ້ຄົນອື່ນເຫັນໄດ້ຢ່າງໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ພຣະເຈົ້າຊົງຈັດຕຽມໄວ້ໃຫ້ທຸກໆຄົນ, ພິເສດສຸດສຳລັບຜູ້ທີ່ອິດເມື່ອຍ ແລະຜູ້ທີ່ຖືກກົດຂີ່ຂົ່ມເຫັງ.
- ໃຫ້ຈິດໃຈແຕ່ລະຄົນຕັ້ງໝັ້ນຄົງສົມບູນ ແລະຄວາມສົມບູນນັ້ນຜ່ານມາທາງຄວາມເຊື່ອໃນພຣະເຢຊູເທົ່ານັ້ນ, ຍ້ອນພຣະອົງຜູ້ດຽວເທົ່ານັ້ນທີ່ໃຫ້ພວກເຮົາມີສັນຕິສຸກ.
- ທີ່ພວກເຮົາຕິດຕາມພຣະເຢຊູຄຣິດ, ພວກຜູ້ລ້ຽງແກະ, ພວກເຮົາມີຊີວິດຢູ່ຢ່າງປອດພັຍ ດ້ວຍພລັງອຳນາດຂອງພຣະອົງຊົງດູແລຮັກສາພວກເຮົາ.
- ພຣະເຈົ້າ ມີພຣະເມດຕາອັນສູງສົ່ງໃຫ້ທຸກຄົນມີຄວາມຊົມຊື່ນຍິນດີ ແລະໃຫ້ອະພັຍຄວາມຜິດບາບຂອງເຂົາເຈົ້າທຸກຄົນ.
- ໃຫ້ພວກເຮົາເປັນຜູ້ໝັ້ນໃຈໃນພຣະປະສົງຂອງພຣະເຈົ້າທີ່ໃຫ້ພວກເຮົາຢ່າງສມ່ຳສເມີ ໃຫ້ພວກເຮົາເຊື່ອ ໄວ້ວາງໃຈ ຄວາມຮັກ, ຄວາມເມດຕາ, ແລະພຣະຄຸນອັນລ້ຳເລີດຂອງພຣະອົງທີ່ມີຕໍ່ພວກເຮົາຕລອດໄປ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**